ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0349 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 15.2.2024

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.

- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້ ທີ່ ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້.
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ສະໝັກທຶນການສຶກສາ ລະດັບວິຊາຊີບຊັ້ນສູງ, ລະດັບປະລິນຍາໂທ ແລະ ປະລິນຍາເອກ ຂອງລັດຖະບານອົດສະຕຣາລີ (**Australia Awards Scholarships**) ສຳລັບສົກປີ **2025.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ໜັງສືແຈ້ງທຶນການສຶກສາຂອງສະຖາບັນລາວ-ອົດສະຕຣາລີ ສະບັບລົງວັນທີ 08 ມັງກອນ 2024;
- ອີງຕາມ ໜັງສືແຈ້ງທຶນການສຶກສາ ຈາກຫ້ອງການ, ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 468/ຫກ, ລົງວັນທີ 02 ກຸມພາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານຂໍຖືເປັນກຽດ ແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເຂົ້າຮ່ວມສະໝັກທຶນການສຶກສາ ລະດັບວິຊາຊີບຊັ້ນສູງ, ລະດັບປະລິນຍາໂທ ແລະ ປະລິນຍາເອກ ຂອງລັດຖະບານອົດສະຕຣາລີ (Australia Awards Scholarships) ສຳລັບສົກປີ 2025.

<u>ເງື່ອນໄຂ ແລະ ວິທີການສະໝັກ:</u>

❖ ລະດັບຊັ້ນວິຊາຊີບຊັ້ນສູງ

- ຜູ້ສະໝັກຕ້ອງໄດ້ຈົບການສຶກສາໃນລະດັບມັດທະຍົມຕອນປາຍ ຫຼື ຈະຈົບມັດທະຍົມຕອນປາຍ ກ່ອນວັນທີ 30 ກັນຍາ 2024;
- ສຳລັບຜູ້ທີ່ ຈົບການສຶກສາລະດັບ ອະນຸປະລິນຍາ ຫຼື ລະດັບປະລິນຍາຕີ ແມ່ນຕ້ອງມີປະສົບການໃນການເຮັດວຽກຢ່າງໜ້ອຍ 02 ປີ.

❖ <u>ລະດັບປະລິຍາໂທ</u>

- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸບໍ່ເກີນ 50 ປີ;
- ຜູ້ສະໝັກໃນລະດັບປະລິນຍາໂທ ຕ້ອງມີປະສົບການໃນການເຮັດວຽກທີ່ກ່ຽວຂ້ອງ ຢ່າງໜ້ອຍ 02 ປີ.
- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາຕີ ຂຶ້ນໄປ ທັງພາຍໃນ ແລະ ຕ່າງປະເທດ(ໃບປະກາດ ແລະ ໃບຄະແນນແມ່ນໃຫ້ແປເປັນພາສາອັງກິດສຳລັບຜູ້ສະໝັກທີ່ຈົບພາຍໃນ)
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ, ຖ້າມີຄະແນນ IELTS ຈະເປັນການດີ;
- ຜູ້ສະໝັກທີ່ໄດ້ຈົບການສຶກສາລະດັບປະລິນຍາໂທແລ້ວກໍ່ສາມາດສະໝັກໄດ້ ແຕ່ຈະໄດ້ຮັບບຸລິມະສິດຕາມຫລັງຜູ້ທີ່ຍັງບໍ່ທັນໄດ້ຮັບທຶນປະລິນຍາໂທມາກ່ອນ;



ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com

❖ <u>ລະດັບປະລິນຍາເອກ</u>

- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາໂທ ຂຶ້ນໄປ (ໃບປະກາດ ແລະ ໃບຄະແນນແມ່ນໃຫ້ແປເປັນພາສາອັງກິດສຳລັບຜູ້ສະໝັກທີ່ຈົບພາຍໃນ);
- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸບໍ່ເກີນ 50 ປີ;
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ ທັງພາສາເວົ້າ ແລະ ຂຽນ ໂດຍມີຄະແນນ IELTS ຢ່າງໜ້ອຍແມ່ນ 6.5;
- ຜູ້ສະໝັກໃນລະດັບປະລິນຍາເອກ ຕ້ອງມີປະສົບການໃນການເຮັດວຽກທີ່ກ່ຽວຂ້ອງກັບລະດັບປະລິນຍາເອກທີ່ຕົນເອງສະໝັກຢ່າງໜ້ອຍ 03 ປີ.

❖ ສຳລັບ Government of Laos approval letter ຂອງພະນັກງານຈາກບັນດາກົມ, ສະຖາບັນ, ສູນ ຢູ່ຂັ້ນສູນກາງລວມທັງບັນດາວິທະຍາໄລ ທີ່ຂຶ້ນກັບກົມຈັດຕັ້ງ ແລະ ພະນັກງານ ແມ່ນກົມຈັດຕັ້ງ ແລະ ພະນັກງານ ເຊັນຢັ້ງຢືນໃຫ້, ສ່ວນພະນັກງານຂັ້ນທ້ອງຖິ່ນ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງ ເຊັນຢັ້ງຢືນໃຫ້.

ສຳລັບຮູບແບບການສະໝັກແມ່ນໃຫ້ສະໝັກຜ່ານລະບົບອອນລາຍໂດຍຜ່ານທາງເວັບໄຊ <u>www.Australia</u> Awards Laos.org **ກ່ອນວັນທີ 30 ເມສາ 2024** ພາຍຫຼັງສະໝັກຜ່ານທາງເວັບໄຊ ແລ້ວໃຫ້ສຳເນົາ, ສະແກນສົ່ງໃຫ້ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ ເພື່ອເປັນຂໍ້ມູນ ແລະ ຕິດຕາມ, ສ່ວນລາຍລະອຽດເພີ່ມເຕີມແມ່ນໃຫ້ພົວພັນ ກົມຈັດຕັ້ງ ແລະ ພະນັກງານ ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569.

**ໝາຍເຫດ:** ສະຖາບັນລາວ-ອົດສະຕຣາລີ (LAI) ຈະໄດ້ເຜີຍແຜ່ຂໍ້ມູນໃຫ້ພະນັກງານລັດຖະກອນ ກ່ຽວກັບເງື່ອນໄຂ ແລະ ຂັ້ນຕອນການສະໝັກທຶນການສຶກສາ ຂອງລັດຖະບານອົດສະຕຣາລີ ສຳລັບສົກປີ 2025, ໃນວັນທີ **16 ກຸມພາ 2024**, **ເວລາ 13: 30 – 16: 00 ໂມງ,** ທີ່ ຫ້ອງປະຊຸມ ຫຼວງພະບາງ ຂອງໂຮງແຮງເມືອງແທ່ງ, ນະຄອນຫຼວງວຽງຈັນ ແລະ ສາມາດລົງທະບຽນອອນລາຍ ເພື່ອເຂົ້າຮ່ວມໄດ້ ທີ່ https://bit.ly/Info2025-Government.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ບຸນທະວີ ໄຊຍະເພັດ



ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com